# ພວກເຮົາຈະເລີ້ມຕົ້ນຈາກໃສ?

ຕິດຕໍ່ຫາຜູ້ປະສານງານການຊ່ວຍເຫລືອຄອບຄົວ (FRC)

- FRC ສາມາດຊ່ວຍເຫລືອທ່ານຊອກຫາລາຍລະອຽດກ່ຽວກັບ:
  - ການບໍລິການພິເສດສະເພາະສຳລັບເດັກທາລົກ ແລະ ເດັກກຳລັງຮຽນຍ່າງທີ່ມີການສູນເສັຽໃນການຟັງສຽງ
  - ການອຸ້ມຊູພໍ່ແມ່ ແລະ ການປຶກສາ
  - ການອອກເງິນທຶນ
- ເພື່ອຈະຊອກຫາ FRC ຢູ່ໃນເຂດຂອງທ່ານ, ໂທຫາສາຍດ່ວນຂອງສຸຂະພາບຄອບຄົວ (Family Health Hotline) ໄດ້ທີ່ 1-800-322-2588 ຫລື ໂດຍຜ່ານການບໍລິການຕໍ່ສາຍໂດຍການບິບໄປຫາເລກ 711 ຫລື ໄປຫາເວບໄຊທ໌ຂອງການອຸ້ມຊູແຕ່ເລີ້ມຕົ້ນສຳລັບເດັກທາລົກ ແລະ ເດັກກຳລັງຮຽນຍ່າງ (Early Support for Infants and Toddlers) ໄດ້ທີ່ www.del.wa.gov/esit

ບ່ອນຊ່ວຍເຫລືອອື່ນໆ:

- Boys Town National Research Hospital
  www.babyhearing.org
  402-498-6511 ຫລື TTY 402-498-6543
- Early Support for Infants and Toddlers (ESIT)
  www.del.wa.gov/esit
  360-725-3500
- Hands and Voices
  www.handsandvoices.org
  217-357-3647
- Washington State Hands and Voices
  www.wahandsandvoices.org
- Office of the Deaf and Hard of Hearing (ODHH)
  http://odhh.dshs.wa.gov
  360-902-8000 ສຽງເວົ້າ/TTY
  or 1-800-422-7930 ສຽງເວົ້າ /TTY



Washington State Department of
Early Learning

Early Support for Infants and Toddlers

DEL 11-014 LA (Rev. 7/11)

ການແບ່ງແຍກຊົນຊັ້ນວັນນະໄດ້ຖືກຫວງຫ້າມຢູ່ໃນທຸກໆໂຄງການ ແລະ ກິຈກັມ: ຈະບໍ່ມີຄົນໃດຈະຖືກຍົກເວັ້ນອອກໄປຍ້ອນ ຜິວພັນ, ສີສັນ, ສາສະນາ,ລັດທິ, ເຊື້ອຊາດດັ້ງເດີມ, ເພດ, ອາຍຸ ຫລື ຄວາມເສັຽອົງຄະ.



# ເດັກທາລົກ ແລະ ເດັກກຳລັງຮຽນຍ່າງ

## ຜູ້ທີ່ ຫູຫນວກ ຫລື ຍາກໃນການຟັງສຽງ

ເພື່ອຄວາມຊ່ວຍເຫລືອ
ແລະ ລາຍລະອຽດ...

www.del.wa.gov/esit

## ຄຳແນະນຳ

ທ່ານຫາກໍ່ຮູ້ຈັກວ່າລູກຂອງທ່ານມີການສູນເສັຽໃນການຟັງສຽງ. ອັນນີ້ອາດຈະເປັນເວລາທີ່ຫຍຸ້ງຍາກທີ່ສຸດ, ແຕ່ວ່າທ່ານບໍ່ແມ່ນວ່າຈະຢູ່ໂດດດ່ຽວ. ມັນມີການຊ່ວຍເຫລືອ ແລະ ການອູ້ມຊູໄວ້ໃຫ້ສຳລັບລູກຂອງທ່ານ ແລະ ຄອບຄົວຂອງທ່ານ.

ທ່ານອາດຈະມີຄຳຖາມຫລາຍໆອັນ. ປື້ມຄູ່ມືຫົວນີ້ຈະຊ່ວຍທ່ານຊອກເອົາຄຳຕອບ ແລະ ເລີ້ມຕົ້ນທີ່ຈະຄົ້ນຄວ້າຫາທາງເລືອກທີ່ມີໄວ້ໃຫ້ສຳລັບລູກຂອງທ່ານ ແລະ ຄອບຄົວຂອງທ່ານ.

ອັນນີ້ແມ່ນການເລີ້ມຕົ້ນ. ທ່ານ ແລະ ລູກຂອງທ່ານຈະໄດ້ຮຽນຮູ້ໄປນຳຕະລອດທາງ. ພວກເຮົາຫວັງວ່າປື້ມຄູ່ມືຫົວນີ້ຈະຊ່ວຍເຫລືອໄດ້ຫລາຍ, ໃນດຽວນີ້ແລະ ໃນອະນາຄົດ.



## ການອູ້ມຊູແລະບ່ອນຊ່ວຍເຫລືອ

“ຫລັງຈາກທີ່ພວກເຮົາໄດ້ສວຍໂອກາດເອົາການບໍຣິການເວົ້າແຊກແຊງແຕ່ເລີ້ມຕົ້ນອັນດີທີ່ສຸດອັນນີ້,ພວກເຮົາໄດ້ພົບພໍ່ວ່າອະນາຄົດຂອງລູກສາວຂອງພວກເຮົາມີຄວາມຫວັງຢ່າງແທ້ຈິງຫລາຍປານໃດ.”

– Bob K., Spokane, WA
ພໍ່ຂອງການເຄັດອາຍຸ 6 ປີ

### ລູກຂອງທ່ານຈະຮຽນຮູ້ທີ່ຈະຕິດຕໍ່ນຳກັນ

ຄອບຄົວສາມາດຊ່ວຍເຫລືອລູກຂອງເຂົາເຈົ້າໃຫ້ຮຽນຮູ້ການຕິດຕໍ່ນຳກັນ, ການປາກເວົ້າ, ແລະ ຄວາມຊຳນານດ້ານພາສາໂດຍການໃຊ້ຫົນທາງ ແລະ ເຄື່ອງມືຫລາຍໆຢ່າງ. ແຕ່ຕົ້ນ, ການໃຊ້ເຄື່ອງຊ່ວຍຟັງສຽງ ຫລື ການຟັງເຄື່ອງຂະຍາຍສຽງໃສ່ກ້ອງຜິວຫນັງທີ່ເຫມາະສົມ, ພ້ອມທັງການອູ້ມຊູພິເສດສະເພາະ, ສາມາດຊ່ວຍເຫລືອລູກຂອງທ່ານໃຫ້ຄືບຫນ້າການຟັງສຽງ ແລະ ພາສາປາກເວົ້າ. ການໃຊ້ການຕິດຕໍ່ເປັນຮູບພາບໃນຂັ້ນຕົ້ນສາມາດຊ່ວຍເຫລືອລູກຂອງທ່ານໃຫ້ຄືບຫນ້າການຟັງສຽງ ແລະ ພາສາປາກເວົ້າ, ທັງທາງປາກເປົ່າ ແລະ ພາສາໃບ້. ຄະນະທີມງານເວົ້າແຊກແຊງແຕ່ເລີ້ມຕົ້ນສາມາດຊ່ວຍທ່ານຄົ້ນຄວ້າຊອກຫາທາງເລືອກຂອງທ່ານ, ຊອກຫາຜູ້ຊ່ຽວຊານທີ່ມີຄຸນນະວຸດທິ ແລະ ບ່ອນຊ່ວຍເຫລືອ, ແລະ ພົບເຫັນການປະສົມເຂົ້າກັນຂອງເຄື່ອງມື ແລະ ຫົນທາງທີ່ໃຊ້ການໄດ້ດີທີ່ສຸດສຳລັບລູກຂອງທ່ານ ແລະ ຄອບຄົວຂອງທ່ານ.

### ຂ້າງລຸ່ມນີ້ແມ່ນລາຍຊື່ຂອງຜູ້ຊ່ຽວຊານຜູ້ທີ່ຈະເອົາການບໍຣິການໃຫ້ໄດ້ສຳລັບລູກຂອງທ່ານແລະຄອບຄົວຂອງທ່ານ

**ທ່ານຫມໍຊ່ຽວຊານເຣື່ອງການຟັງ** ສຽງແມ່ນຜູ້ຊ່ຽວຊານທີ່ຖືກຝຶກຝົນມາເພື່ອຈະກວດເບິ່ງການຟັງສຽງ. ທ່ານຫມໍຊ່ຽວຊານເຣື່ອງການຟັງສຽງແນະນຳ ແລະ ຕິດຕັ້ງເຄື ອງຊ່ວຍຟັງສຽງໃສ່ຫູ ແລະ ເຄື ອງຟັງສຽງແນວອື່ນ.

**ຜູ້ຊ່ຽວຊານການຝຶກຝົນການຟັງສຽງໃຫ້ດີຄືນ** ພັດທະນາຄວາມຊຳນານການຟັງສຽງຂອງລູກຂອງທ່ານ ແລະ ຊ່ວຍເຫລືອທ່ານໃຫ້ຮຽນຮູ້ຄວາມຊຳນານເພື່ອຈະອູ້ມຊູລູກຂອງທ່ານໃນການຮຽນຮູ້ພາສາປາກເວົ້າ.

**ຜູ້ປຶກສາ/ຜູ້ບຳບັດເອົາການອູ້ມຊູທາງດ້ານຈິດໃຈ** ໃຫ້ສຳລັບລູກ ແລະ ຄອບຄົວ. ທ່ານອາດຈະເລືອກເອົາທີ່ຈະພົບກັບຜູ້ປຶກສາ ຫລື ຜູ້ບຳບັດເພື່ອຈະຊ່ວຍນຳບັນຫາທາງຈິດໃຈກ່ຽວກັບການສູນເສັຽການຟັງສຽງຂອງລູກຂອງທ່ານ. ມັນຈະເປັນການດີອີກຄືກັນທີ່ຈະຕິດແທດນຳ ແລະ ຮຽນຮູ້ຈາກຄອບຄົວອື່ນຜູ້ທີ່ໄດ້ຜ່ ານຜ່າເຣື່ອງນີ້ມາກ່ອນ.

**ຜູ້ຊ່ຽວຊານການເວົ້າແຊກແຊງແຕ່ເລີ້ມຕົ້ນ** ເຮັດວຽກນຳຄອບຄົວຂອງເດັກນ້ອຍທີ່ມີຄວາມຕ້ອງການດ້ານການຕິດຕໍ່ ແລະ ການຮຽນຮູ້. ເຂົາເຈົ້າເຮັດວຽກນຳເດັກນ້ອຍແຕ່ກຳເນີດຮອດອາຍຸ 3 ປີ. ເຂົາເຈົ້າຍັງຈະເຮັດການຕີຣາຄາ ແລະ ການປະເມີນຜົນອີກຄືກັນໃນຄວາມສາມາດຂອງລູກຂອງທ່ານ.

**ຜູ້ປະສານງານການຊ່ວຍເຫລືອຄອບຄົວ(FRC)** ຊ່ວຍຄອບຄົວທີ່ມີເດັກນ້ອຍຕ່ຳກວ່າ 3 ປີທີ່ຈະຕັດສິນໃຈວ່າການບໍຣິການອັນໃດແດ່ທີ່ເຂົາເຈົ້າຕ້ອງການ ແລະ ຈະຈ່າຍສຳລັບການບໍຣິການໄດ້ແນວໃດ.

**ທ່ານຫມໍປິ່ນປົວຫູ,ດັງແລະລຳຄໍ (ຜູ້ຊ່ຽວຊານພະຍາດຫູ,ດັງແລະລຳຄໍ)** ເປັນຜູ້ຊ່ຽວຊານຜູ້ທີ່ກວດເບິ່ງ ແລະ ປິ່ນປົວການອັກເສບໃນຫູ ແລະ ສະພາບພະຍາບານແນວອື່ນທີ່ກ່ຽວພັນນຳຫູທາງນອກ, ທາງກາງ, ແລະ ທາງໃນ.

**ນັກວິທະຍາສາດດ້ານພາສາປາກເວົ້າ** ເອົາການບຳບັດໃຫ້ເພື່ອຈະເຮັດໃຫ້ງ່າຍຂື້ນໃນການພັດທະນາການຈະເຣີນເຕີບໂຕ ແລະ ຄວາມຊຳນານດ້ານພາສາຂອງລູກຂອງທ່ານ.

**ນາຍຄູສຳລັບຫູຫນວກຫລືຍາກທີ່ຈະຟັງສຽງ** ໄດ້ຖືກຢັ້ງຢືນມາເພື່ອຈະສອນເດັກນ້ອຍທີ່ມີການສູນເສັຽໃນການຟັງສຽງ. ບາງຄົນມີການຝຶກຝົນ ແລະ ປະສົບປະການເພີ້ມເຕີມໃນການເຮັດວຽກນຳຄອບຄົວຂອງເດັກທາຣົກ ແລະ ເດັກກຳລັງຮຽນຍ່າງຜູ້ທີ່ຫູຫນວກ/ຍາກທີ່ຈະຟັງສຽງ.

**ທ່ານຫມໍບຳບັດອື່ນໆຫລາຍໆຄົນ**, ເຊັ່ນວ່າຜູ້ບຳບັດຮ່າງກາຍ, ມີໄວ້ໃຫ້ເພື່ອຈະອູ້ມຊູການເຕີບໂຕຂອງລູກຂອງທ່ານຕາມທີ່ຖືກພິຈາຣະນາອອກໂດຍຄວາມຕ້ອງການດ້ານການຈະເຣີນເຕີບໂຕຂອງເຂົາເຈົ້າ.